ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 67 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 12.02.2018

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການ ຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມໜັງສືສະເໜີ ສະບັບເລກທີ 3644/ຮສສ, ລົງວັນທີ 16 ຕຸລາ 2017 ແລະ ສະໂນດນຳສົ່ງ ສະບັບເລກທີ 3803/ຫກ, ລົງວັນທີ 12 ທັນວາ 2017 ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ອີງຕາມໜັງສືສະເໜີ ສະບັບເລກທີ 30/ພນ, ລົງວັນທີ 24 ມັງກອນ 2018 ຂອງກະຊວງພາຍໃນ.

**ນາຍົກລັດຖະມົນຕີ ອອກດຳລັດ :**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ໃນ ສປປ ລາວ ເພື່ອເປັນບ່ອນອີງທາງດ້ານນິຕິກຳ ໃຫ້ຄະນະກຳມະການດັ່ງກ່າວ ໃນການຊີ້ນຳ ແລະ ຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ໃນ ສປປ ລາວ ໃນຂອບເຂດທົ່ວປະເທດ ໃຫ້ດຳເນີນຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ໃນ ສປປ ລາວ ຂຽນເປັນຕົວຫຍໍ້ວ່າ “ ຄຊກລ ” ແມ່ນການຈັດຕັ້ງໜຶ່ງຂອງລັດ ທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການຊ່ວຍລັດຖະບານ ໃນການຄົ້ນຄວ້າ, ຊີ້ນຳ ແລະ ປະສານງານກັບບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ແລະ ສາກົນ ເພື່ອຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ໃນ ສປປ ລາວ ໃນຂອບເຂດທົ່ວປະເທດ.

ມາດຕາ 3 ອະທິບາຍຄຳສັບ

1. ລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ລບຕ) ໝາຍເຖິງ ວັດຖຸລະເບີດເສດເຫຼືອຈາກປາງສົງຄາມ, ຊຶ່ງອາດຈະເຄີຍຖືກນຳໃຊ້ ຫຼື ບໍ່ໄດ້ນຳໃຊ້ກໍ່ຕາມ;
2. ອົງການປະຕິບັດງານແກ້ໄຂບັນຫາ ລບຕ ໝາຍເຖິງ ອົງການຈັດຕັ້ງຕ່າງໆ ທີ່ໄດ້ຮັບອະນຸຍາດຈາກລັດຖະບານໃນການແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ ເປັນຕົ້ນ: ກອງກວດກູ້ລະເບີດ ເພື່ອມະນຸດສະທຳ ຂອງກອງທັບ, ໂຄງການເກັບກູ້ລະເບີດແຫ່ງຊາດ, ບັນດາອົງການກວດກູ້ລະເບີດ ເພື່ອມະນຸດສະທຳ ຂອງຕ່າງປະເທດ, ອົງການຈັດຕັ້ງທາງສັງຄົມຂອງລາວ, ບໍລິສັດເກັບກູ້ລະເບີດຂອງລາວ ແລະ ຕ່າງປະເທດ ພ້ອມດ້ວຍພາກສ່ວນອື່ນໆ ທີ່ປະຕິບັດໜ້າທີ່ວຽກງານແກ້ໄຂ ບັນຫາ ລບຕ;
3. ອົງການກວດກູ້ລະເບີດ ເພື່ອມະນຸດສະທຳ ຂອງຕ່າງປະເທດ ໝາຍເຖິງ ອົງການທີ່ເຮັດວຽກງານແກ້ໄຂບັນຫາ ລບຕ ໂດຍບໍ່ຫວັງຜົນກຳໄລ ແລະ ບໍ່ສັງກັດລັດຖະບານ;
4. ຜູ້ຖືກເຄາະຮ້າຍ ຈາກ ລບຕ ໝາຍເຖິງ ບຸກຄົນທີ່ເສຍຊີວິດ ຫຼື ໄດ້ຮັບບາດເຈັບ ລວມທັງສະມາຊິກຄອບຄົວ ແລະ ຊຸມຊົນ ທີ່ໄດ້ຮັບຜົນກະທົບ ຈາກ ລບຕ;
5. ຖານຂໍ້ມູນກ່ຽວກັບການແກ້ໄຂບັນຫາ ລບຕ ໝາຍເຖິງ ຂໍ້ມູນການຖິ້ມລະເບີດ, ການຕົກຄ້າງ ຂອງ ລບຕ, ລາຍລະອຽດຂອງ ລບຕ, ການສຳຫຼວດ-ກວດກູ້, ການໂຄສະນາຜົນຮ້າຍ ຂອງ ລບຕ, ການເກີດອຸປະຕິເຫດ ຈາກ ລບຕ ແລະ ການຊ່ວຍເຫຼືອຜູ້ເຄາະຮ້າຍ ຈາກ ລບຕ;
6. ວຽກງານການແກ້ໄຂບັນຫາ ລບຕ ໝາຍເຖິງ ການສຳຫຼວດ-ກວດກູ້, ການໂຄສະນາທີ່ມາ ແລະ ຄວາມອັນຕະລາຍ ຂອງ ລບຕ ແລະ ການຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍ ຈາກ ລບຕ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 4 ໜ້າທີ່

1. ຊ່ວຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຄົ້ນຄວ້າ, ຫັນເອົາແນວທາງນະໂຍບາຍຂອງພັກ, ລັດ, ຍຸດທະສາດ, ແຜນການ, ໂຄງການ ແລະ ມະຕິຕົກລົງ ຂອງລັດຖະບານ ກ່ຽວກັບວຽກງານແກ້ໄຂບັນຫາ ລບຕ ມາເປັນຍຸດທະສາດ, ແຜນການ ແລະ ແຜນງານ ແລະ ໂຄງການລະອຽດ ຂອງຕົນ;
2. ຊ່ວຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຄົ້ນຄວ້າ, ສ້າງ, ໂຄສະນາເຜີຍແຜ່ນິຕິກຳ, ລະບຽບການ, ຄຳສັ່ງ, ແຈ້ງການ, ຍຸດທະສາດ ລວມທັງມາດຕະການຕ່າງໆ ຂອງວຽກງານແກ້ໄຂບັນຫາ ລບຕ;
3. ຊີ້ນຳການສ້າງຖານຂໍ້ມູນ ກ່ຽວກັບການແກ້ໄຂບັນຫາ ລບຕ ແລະ ໂຄສະນາເຜີຍແຜ່ໃຫ້ກວ້າງຂວາງ;
4. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ແລະ ສົ່ງເສີມບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງ ຂັ້ນທ້ອງຖິ່ນ, ອົງການປະຕິບັດງານແກ້ໄຂບັນຫາ ລບຕ ໃນການປະຕິບັດວຽກງານແກ້ໄຂບັນຫາ ລບຕ;
5. ປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ, ປະເທດຜູ້ໃຫ້ທຶນ ແລະ ບັນດາອົງການຈັດຕັ້ງສາກົນຕ່າງໆ ເພື່ອລະດົມທຶນ ແລະ ເຕັກນິກວິຊາການ ເຂົ້າໃນວຽກງານແກ້ໄຂບັນຫາ ລບຕ, ຄຸ້ມຄອງນຳໃຊ້ທຶນ ແລະ ອຸປະກອນຮັບໃຊ້ຕ່າງໆ ໃຫ້ເກີດປະໂຫຍດສູງສຸດ;
6. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ, ຄຸ້ມຄອງອຸປະກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອຮັບໃຊ້ວຽກງານແກ້ໄຂບັນຫາ ລບຕ;
7. ຊີ້ນຳການສ້າງ, ປັບປຸງ ແລະ ຮັບຮອງມາດຕະຖານແຫ່ງຊາດ ກ່ຽວກັບວຽກງານແກ້ໄຂບັນຫາ ລບຕ;
8. ຊີ້ນຳການນຳໃຊ້ ແລະ ການຄຸ້ມຄອງງົບປະມານ, ຊັບສິນ ຂອງບັນດາອົງການກວດກູ້ລະເບີດ ເພື່ອມະນຸດສະທຳ;

9. ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາ ລບຕ ຂອງບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ແລະ ສະຫຼຸບລາຍງານ ແຕ່ລະໄລຍະ;
10. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຂັ້ນເທິງ.

ມາດຕາ 5 ຂອບເຂດສິດ

1. ສະເໜີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຮັບຮອງ, ລົບລ້າງ ຫຼື ສັ່ງໂຈະ ແຜນຍຸດທະສາດ, ແຜນການ, ໂຄງການ;
2. ສະເໜີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ, ລະບຽບການ ແລະ ມາດຕະຖານຕ່າງໆ ກ່ຽວກັບວຽກງານແກ້ໄຂ ລບຕ;
3. ສະເໜີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ປັບປຸງກົງຈັກການຈັດຕັ້ງ, ຕໍາແໜ່ງງານ, ການບັນຈຸສັບຊ້ອນ ແລະ ຈັດວາງບຸກຄະລາກອນ ທີ່ຂຶ້ນກັບສິດຄຸ້ມຄອງ ຂອງຕົນ;
4. ອອກ ແລະ ຕໍ່ໃບຢັ້ງຢືນວິຊາການ ແລະ ມາດຕະຖານການປະຕິບັດງານ ໃຫ້ແກ່ອົງການປະຕິບັດງານແກ້ໄຂບັນຫາ ລບຕ;
5. ເຊັນບົດບັນທຶກຄວາມເຂົ້າໃຈ ແລະ ບົດບັນທຶກຂໍ້ຕົກລົງ ກ່ຽວກັບວຽກງານແກ້ໄຂບັນຫາ ລບຕ ກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ ຂອງຂັ້ນເທິງ;
6. ຮຽກປະຊຸມ ແລະ ເຂົ້າຮ່ວມກອງປະຊຸມຕ່າງໆ ພາຍໃນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂບັນຫາ ລບຕ;
7. ອະນຸມັດໃຫ້ຫ້ອງການ ຄຊກລ, ບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ດ້ານມະນຸດສະທໍາ ເພື່ອຈັດກອງປະຊຸມ, ສໍາມະນາ ຫຼື ຝຶກອົບຮົບດ້ານວິຊາການແກ້ໄຂບັນຫາ ລບຕ;
8. ສະເໜີ, ດັດແກ້ ແລະ ຮັບຮອງແຜນການ, ງົບປະມານແຫ່ງລັດ ແລະ ທຶນຊ່ວຍເຫຼືອຈາກພາຍໃນ ແລະ ສາກົນສໍາລັບວຽກງານການແກ້ໄຂບັນຫາ ລບຕ;
9. ປະຕິບັດສິດອື່ນໆ ຕາມການມອບໝາຍ ຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

ມາດຕາ 6 ໂຄງປະກອບກົງຈັກ

ຄະນະກໍາມະການແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ໃນ ສປປ ລາວ ມີກົງຈັກຊ່ວຍວຽກ ດັ່ງນີ້:

6.1 ຂັ້ນສູນກາງ

ມີຫ້ອງການ ຄຊກລ ເປັນຫ້ອງການຊ່ວຍວຽກ ຄຊກລ ແລະ ຂຽນຫຍໍ້ວ່າ " ຫຄຊລກ " ສັງກັດໃນໂຄງປະກອບການຈັດຕັ້ງ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ມີພາລະບົດບາດເປັນເສນາທິການໃຫ້ ຄຊກລ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ໃນ ສປປ ລາວ. ຫ້ອງການຊ່ວຍວຽກງານ ຄຊກລ ມີຫົວໜ້າຫ້ອງການທີ່ໄດ້ຮັບການແຕ່ງຕັ້ງ ຈາກນາຍົກລັດຖະມົນຕີ ແລະ ມີຮອງຫົວໜ້າຫ້ອງການຈໍານວນໜຶ່ງ ທີ່ໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີ ປະທານ ຄຊກລ.

6.2 ຂັ້ນແຂວງ ທີ່ມີລະເບີດບໍ່ທັນແຕກ

ມີຄະນະກໍາມະການຄຸ້ມຄອງ ເພື່ອແກ້ໄຂບັນຫາ ລບຕ ຂັ້ນແຂວງ, ມີຊື່ຫຍໍ້ວ່າ: " ຄຄກລ ແຂວງ " ມີພາລະບົດບາດຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ ພາຍໃນແຂວງ;

ມີຫ້ອງການ ຄຄກລ ແຂວງ, ມີຊື່ຫຍໍ້ວ່າ: " ຫຄຄກລ ແຂວງ " ສັງກັດໃນໂຄງປະກອບການຈັດຕັ້ງ ຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມ.

6.3 ຂັ້ນເມືອງ ທີ່ມີລະເບີດບໍ່ທັນແຕກ

ມີຄະນະກຳມະການຄຸ້ມຄອງ ເພື່ອແກ້ໄຂບັນຫາ ລບຕ ເມືອງ ມີຊື່ຫຍໍ້ວ່າ: " ຄຄກລ ເມືອງ " ມີພາລະບົດບາດ ຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກພາຍໃນເມືອງ.

ມີຈຸດປະສານວຽກງານ ລບຕ, ສັງກັດໃນໂຄງປະກອບການຈັດຕັ້ງຂອງຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂອງເມືອງ.

ມາດຕາ 7 ໂຄງປະກອບບຸກຄະລາກອນ

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ໃນ ສປປ ລາວ ປະກອບມີ ບັນດາທ່ານ ໂດຍຕຳແໜ່ງ ດັ່ງລຸ່ມນີ້:

7.1 ຂັ້ນສູນກາງ

1. ທ່ານລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນປະທານ.
2. ທ່ານຮອງລັດຖະມົນຕີກະຊວງການຕ່າງປະເທດ ເປັນຮອງປະທານ.
3. ທ່ານຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ, ຜູ້ປະຈຳການ.
4. ທ່ານຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານ.
5. ທ່ານຮອງຫົວໜ້າກົມໃຫຍ່ເສນາທິການ, ກະຊວງປ້ອງກັນປະເທດ ເປັນຮອງປະທານ.
6. ບັນດາທ່ານຮອງເຈົ້າແຂວງ, ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ ຂອງແຂວງ ທີ່ມີ ລບຕ ເປັນກຳມະການ.
7. ທ່ານຫົວໜ້າຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ໃນ ສປປ ລາວ ເປັນກຳມະການ, ເປັນຫົວໜ້າຫ້ອງການຊ່ວຍວຽກ ຄຊກລ.
8. ທ່ານຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນກຳມະການ.
9. ທ່ານຫົວໜ້າກົມອົງການຈັດຕັ້ງສາກົນ, ກະຊວງການຕ່າງປະເທດ ເປັນກຳມະການ.
10. ທ່ານຫົວໜ້າກົມ 203, ກົມໃຫຍ່ 502, ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ.
11. ທ່ານຫົວໜ້າກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ເປັນກຳມະການ.
12. ທ່ານຫົວໜ້າກົມງົບປະມານ, ກະຊວງການເງິນ ເປັນກຳມະການ.
13. ທ່ານຫົວໜ້າກົມຄົ້ນຄວາມຖີ່, ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນກຳມະການ.
14. ທ່ານຫົວໜ້າກົມສື່ມວນຊົນ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ.
15. ທ່ານຫົວໜ້າກົມປິ່ນປົວ, ກະຊວງສາທາລະນະສຸກ ເປັນກຳມະການ.
16. ທ່ານຫົວໜ້າກົມຊ່າງແສງ, ກະຊວງປ້ອງກັນປະເທດ ເປັນກຳມະການ.
17. ທ່ານຫົວໜ້າກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ, ກະຊວງກະສິກຳ ແລະ ປ່າໄມ້ ເປັນກຳມະການ.
18. ທ່ານຫົວໜ້າກົມທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນກຳມະການ.
19. ທ່ານຫົວໜ້າກົມຂະບວນການ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນກຳມະການ.
20. ທ່ານຫົວໜ້າກົມແຜນການ ແລະ ການຮ່ວມມື, ສູນກາງສະຫະພັນແມ່ຍິງລາວ ເປັນກຳມະການ.
21. ທ່ານຫົວໜ້າກົມຈັດຕັ້ງ ແລະ ພະນັກງານ, ສູນກາງແນວລາວສ້າງຊາດ ເປັນກຳມະການ.
22. ທ່ານຮອງຫົວໜ້າຫ້ອງການ, ກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ.

7.2 ຂັ້ນແຂວງ ທີ່ມີລະເບີດບໍ່ທັນແຕກ

ມີຮອງເຈົ້າແຂວງ ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ ເປັນປະທານ. ປະທານຮັບຜິດຊອບຕໍ່ປະທານ ຄຊກລ ແລະ ເຈົ້າແຂວງ ໃນການປະຕິບັດວຽກງານແກ້ໄຂບັນຫາ ລບຕ ຢູ່ພາຍໃນແຂວງ.

ມີຮອງປະທານທີ່ມາຈາກພະແນກ ຮສສ, ຫົວໜ້າກອງບັນຊາການທະຫານ ແລະ ຫົວໜ້າພະແນກພົວພັນຕ່າງປະເທດ ຂອງແຂວງ, ມີຜູ້ຕາງໜ້າຈາກພະແນກການທີ່ກ່ຽວຂ້ອງ ແລະ ຫົວໜ້າຫ້ອງການ ຄຄກລ ແຂວງ ເປັນກຳມະການ.

7.3 ຂັ້ນເມືອງ ທີ່ມີລະເບີດບໍ່ທັນແຕກ

ມີຮອງເຈົ້າເມືອງ ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ ເປັນປະທານ. ປະທານຮັບຜິດຊອບຕໍ່ປະທານ ຄຄກລ ແຂວງ ແລະ ເຈົ້າເມືອງ ໃນການປະຕິບັດວຽກງານແກ້ໄຂບັນຫາ ລບຕ ຢູ່ພາຍໃນເມືອງ.

ມີຮອງປະທານຈຳນວນໜຶ່ງ ທີ່ມາຈາກຫ້ອງການ ຮສສ, ຫົວໜ້າກອງບັນຊາການທະຫານ ແລະ ຫ້ອງການພົວພັນຕ່າງປະເທດ ຂອງເມືອງ ມີຜູ້ຕາງໜ້າຈາກຫ້ອງການທີ່ກ່ຽວຂ້ອງ ຂອງເມືອງ ແລະ ຜູ້ປະສານງານວຽກງານ ຂັ້ນເມືອງ ເປັນກຳມະການ.

## ໝວດທີ 4

## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 8 ຫຼັກການ

1. ປະຕິບັດຫຼັກການແບບລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງສະມາຊິກໃນຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ໃນ ສປປ ລາວ;
3. ທຸກການເຄື່ອນໄຫວ ຂອງ ຄຊກລ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ກົດໝາຍ, ລະບຽບ ແລະ ຫຼັກການລວມ ຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ຫຼື ກະຊວງ ມາຈັດຕັ້ງຜັນຂະຫຍາຍ ໃຫ້ໄດ້ຮັບຜົນດີ.

### ມາດຕາ 9 ແບບແຜນວິທີເຮັດວຽກ

1. ເຮັດວຽກແບບມີແຜນງານ, ແຜນການ ແລະ ໂຄງການລະອຽດ, ແກ້ໄຂວຽກຢ່າງມີຈຸດສຸມ ແລະ ມີເປົ້າໝາຍ;
2. ຄຊກລ ເຄື່ອນໄຫວວຽກງານແບບບໍ່ປະຈຳການ, ຖືເອົາລະບອບປະຊຸມປະຈຳອາທິດ, ເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ເປັນການເຄື່ອນໄຫວ ເພື່ອເປັນການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ-ຜົນເສຍ, ພ້ອມທັງລາຍງານໃຫ້ກະຊວງ ຫຼື ນາຍົກລັດຖະມົນຕີ ແລະ ລັດຖະບານ ຢ່າງເປັນປົກກະຕິ; ໃນກໍລະນີຈຳເປັນ ແລະ ຮີບດ່ວນ ສາມາດເປີດກອງປະຊຸມ ວິສາມັນ ຂອງຄະນະຂຶ້ນ ເພື່ອພິຈາລະນາບັນຫາຮີບດ່ວນ;
3. ມີການປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າ, ອົງການຈັດຕັ້ງມະຫາຊົນ, ການຈັດຕັ້ງສັງຄົມ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

## ໝວດທີ 5

## ບົດບັນຍັດສຸດທ້າຍ

### ມາດຕາ 10 ງົບປະມານ, ຕາປະທັບ ແລະ ເຄື່ອງໝາຍ

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ໃນ ສປປ ລາວ (ຄຊກລ) ມີງົບປະມານ, ຕາປະທັບ ແລະ ເຄື່ອງໝາຍ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 11 ການຜັນຂະຫຍາຍ**

ມອບໃຫ້ປະທານຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ໃນ ສປປ ລາວ ອອກຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຫ້ອງການ ຄຊກລ, ຄຄກລ ຂັ້ນແຂວງ, ຂັ້ນເມືອງ, ຫ້ອງການຊ່ວຍວຽກ ຄຄກລ ແຂວງ ແລະ ໃຫ້ມີການແບ່ງໜ້າທີ່ຄວາມຮັບຜິດຊອບ ໃຫ້ບັນດາຮອງປະທານ ແລະ ກຳມະການ ຄຊກລ ຢ່າງຈະແຈ້ງ.

**ມາດຕາ 12 ການຈັດຕັ້ງປະຕິບັດ**

ຄຊກລ, ບັນດາກະຊວງ, ອົງການລັດທຽບເທົ່າ, ແຂວງ, ນະຄອນຫລວງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 13 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດ ສະບັບເລກທີ 43/ລບ, ລົງວັນທີ 03 ກຸມພາ 2015 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ໃນ ສປປ ລາວ.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ